5412.12
Revised January 14, 2008
Laotian

# ຜູ້ມີສິດເລືອກຕັ້ງ ທີ່ພິການ

Protection & Advocacy, Inc.

100 Howe Ave., Suite 185-N
Sacramento CA 95825
1-800-776-5746
www.pai-ca.org

# ຜູ້ມີສິດເລືອກຕັ້ງທີ່ພິການ

ຊາວອາເມລິກັນທີ່ພິການຈຳນວນຫລາຍກວ່າ 35 ລ້ານຄົນມີສິດທີ່ຈະລົງຄະແນນສຽງເລືອກຕັ້ງໄດ້. ແຕ່ມີພຽງຈຳນວນ 15 ລ້ານຄົນເທົ່ານັ້ນທີ່ໄປລົງຄະແນນເລືອກຕັ້ງ. ນັ້ນກໍ່ໝາຍຄວາມວ່າມີຄົນພິການຈຳນວນ 20 ລ້ານຄົນທີ່**ບໍ່**ໄປໃຊ້ສິດລົງຄະແນນເລືອກຕັ້ງ. ການໄປໃຊ້ສິດລົງຄະແນນເລືອກຕັ້ງຂອງເຂົາເຈົ້າອາດມີຜົນກະທົບຢ່າງຫລວງຫລາຍຕໍ່ຄົນທີ່ຖືກເລືອກຕັ້ງແລະຕໍ່ນະໂຍບາຍຕ່າງໆທີ່ຈະສົ່ງຜົນກະທົບຕໍ່ຄົນພິການ. ການເລືອກຕັ້ງບາງຢ່າງກໍ່ໃກ້ເຂົ້າມາຫລາຍແລ້ວ. ຄະແນນສຽງທຸກຄະແນນມີຄ່າ.

ການລົງຄະແນນສຽງຂອງທ່ານຈະເປັນໂຕຕັດສິນວ່າໃຜຈະຖືກເລືອກໃຫ້ເຂົ້າເຮັດວຽກໃນຫ້ອງການ. ການເລືອກຕັ້ງແມ່ນໂອກາດຂອງທ່ານທີ່ຈະບອກໃຫ້ຜູ້ສະໝັກຮັບເລືອກຕັ້ງຮູ້ວ່າ ບັນຫາແລະເລື້ອງໃດແດ່ທີ່ສຳຄັນຕໍ່ທ່ານ. ຄະແນນສຽງຂອງທ່ານມີຄ່າ! ແລະສຳຄັນ!

ປື້ມຫົວນີ້ຈະບອກທ່ານກ່ຽວກັບ:

- ກົດໝາຍຕ່າງໆທີ່ຄຸ້ມຄອງຜູ້ລົງຄະແນນສຽງທີ່ພິການ
- ວິທີການຈົດຊື່ລົງທະບຽນເພື່ອລົງຄະແນນສຽງ
- ອຸປະກອນຕ່າງໆທີ່ຈະຊ່ວຍທ່ານໃນການລົງຄະແນນສຽງ
- ວິທີການລົງຄະແນນສຽງ
- ໂຄງການ PAI ສາມາດຊ່ວຍທ່ານໄດ້ແນວໃດແດ່

# ສາລະບານ


ຜູ້ມີສິດເລືອກຕັ້ງທີ່ພິການ . . . . . . . . . . 2
ສາລະບານ . . . . . . . . . . 2
ກົດໝາຍຂອງຣັຖແລະຣັຖບານກາງທີ່ຄຸ້ມຄອງຜູ້ລົງຄະແນນສຽງທີ່ພິການ . . . . . . . . . . 3
ການລົງທະບຽນເພື່ອລົງຄະແນນສຽງເລືອກຕັ້ງ . . . . . . . . . . 6
ອຸປະກອນຕ່າງໆເພື່ອຊ່ວຍທ່ານໃນການລົງຄະແນນສຽງເລືອກຕັ້ງ . . . . . . . . . . 10
ວິທີການລົງຄະແນນສຽງເລືອກຕັ້ງ . . . . . . . . . . 12
ການລົງຄະແນນສຽງເລືອກຕັ້ງໂດຍໃຊ້ບັດລົງຄະແນນສຳລັບຜູ້ບໍ່ມາ . . . . . . . . . . 14
ຄຳຖາມທົ່ວໄປ . . . . . . . . . . 15
ເຈົ້າໜ້າທີ່ດູແລການເລືອກຕັ້ງ, ແຍກຕາມຄາວຕີ້ . . . . . . . . . . 16

# ກົດໝາຍຂອງຣັຖແລະຣັຖບານກາງທີ່ຄຸ້ມຄອງຜູ້ລົງຄະແນນສຽງທີ່ພິການ



ທ່ານມີສິດທີ່ຈະລົງຄະແນນສຽງເລືອກຕັ້ງໃນບ່ອນທີ່ສາມາດເຂົ້າເຖິງໄດ້.
ທ່ານຍັງມີສິດໃນເລື້ອງການເກັບເປັນຄວາມລັບແລະວິທີການທີ່ງ່າຍໃນການລົງຄະແນນເລືອກຕັ້ງ.
ກົດໝາຍຂອງຣັຖບານກາງແລະຂອງຣັຖຄາລິຟໍເນັຽຄຸ້ມຄອງສິດທິຂອງທ່ານໃນການລົງຄະແນນສຽງເລືອກຕັ້ງ.

## ກົດໝາຍຣັຖບານກາງ

ກົດໝາຍຣັຖບານກາງທີ່ປົກປ້ອງຜູ້ລົງຄະແນນສຽງທີ່ພິການຄື:

## ກົດໝາຍວ່າດ້ວຍການຊ່ວຍເຫລືອໃນການລົງຄະແນນສຽງເລືອກຕັ້ງໃນອາເມລິກາ (Help America Vote Act, HAVA)

HAVA, ກົດໝາຍວ່າດ້ວຍການຊ່ວຍເຫລືອໃນການອອກສຽງເລືອກຕັ້ງຂອງອາເມລິກາ (Help America Vote Act) ປີ 2002, ມີກົດລະບຽບສໍາລັບລະບົບການລົງຄະແນນສຽງເລືອກຕັ້ງໃນການເລືອກຕັ້ງຂອງຣັຖບານກາງ. ກົດລະບຽບເຫລົ່ານີ້ ລວມມີການຮັບປະກັນວ່າລະບົບການເລືອກຕັ້ງສາມາດເຂົ້າເຖິງໄດ້ສໍາລັບຜູ້ລົງຄະແນນເລືອກຕັ້ງທີ່ພິການ. **ການເຂົ້າເຖິງໄດ້** ໝາຍເຖິງວ່າລະບົບການເລືອກຕັ້ງຕ້ອງສາມາດນໍາໃຊ້ໄດ້ງ່າຍພ້ອມກັບມີຄວາມເປັນສ່ວນຕົວ ແລະເປັນອິດສະຫລະ.

HAVA ເວົ້າວ່າ:

- ໂດຍບໍ່ເກີນວັນທີ 1 ມົກຣາ 2006, ທຸກເຂດປົກຄອງຕ້ອງມີເຄື່ອງຈັກ ຫລືລະບົບສໍາລັບໃຊ້ລົງຄະແນນສຽງຢ່າງໜ້ອຍໜຶ່ງລະບົບສໍາລັບໃຫ້ຜູ້ລົງຄະແນນເລືອກຕັ້ງທີ່ພິການໃຊ້ລົງຄະແນນສຽງ. ອັນນີ້ລວມເຖິງຜູ້ລົງຄະແນນສຽງທີ່ຕາບອດ ຫລືສາຍຕາບໍ່ດີ.
- ຜູ້ລົງຄະແນນສຽງແຕ່ລະຄົນຕ້ອງສາມາດລົງຄະແນນສຽງໄດ້ຢ່າງເປັນຄວາມລັບໂດຍຕົນເອງໄດ້.
- ຣັຖບານຂອງຣັຖແລະຣັຖບານທ້ອງຖິ່ນສາມາດຂໍເອົາເງິນຊ່ວຍເຫລືອ ເພື່ອມາຊ່ວຍເຮັດໃຫ້ສະຖານທີ່ລົງຄະແນນເລືອກຕັ້ງສາມາດເຂົ້າເຖິງໄດ້.
- ເຈົ້າໜ້າທີ່ດູແລການເລືອກຕັ້ງແລະພະນັກງານເຮັດວຽກຢູ່ບ່ອນເລືອກຕັ້ງຈະໄດ້ຮັບການເຝິກອົບຮົມ ເພື່ອຊ່ວຍເຫລືອຜູ້ມີສິດເລືອກຕັ້ງທີ່ພິການ.

*42 USC § 15301, et seq.*

## ກົດໝາຍວ່າດ້ວຍເລື້ອງຊາວອາເມລິກັນທີ່ພິການ (Americans with Disabilities Act, ADA) ປີ 1990

ADA ຄືກົດໝາຍທີ່ເວົ້າວ່ານາຍຈ້າງ, ຣັຖບານຂອງຣັຖແລະຂອງທ້ອງຖິ່ນ, ແລະສະຖານທີ່ສາທາລະນະບໍ່ສາມາດຈໍາແນກຫລືກີດກັນຕໍ່ຕ້ານທ່ານຍ້ອນຄວາມພິການຂອງທ່ານໄດ້.

ທ່ານຕ້ອງສາມາດລົງທະບຽນແລະອອກສຽງເລືອກຕັ້ງໄດ້. ຄາວຕີ້ຂອງທ່ານຕ້ອງມີສະຖານທີ່ລົງຄະແນນເລືອກຕັ້ງທີ່ສາມາດເຂົ້າເຖິງໄດ້ສໍາລັບທ່ານ. ສະຖານທີ່ລົງຄະແນນເລືອກຕັ້ງທີ່ສາມາດເຂົ້າເຖິງໄດ້ໝາຍເຖິງ ບ່ອນຈອດຣົຖ, ທາງຍ່າງໄປບ່ອນລົງຄະແນນເລືອກຕັ້ງ, ທາງເຂົ້າ, ທາງອອກແລະບໍລິເວນລົງຄະແນນສຽງທີ່ໃຫ້ທ່ານສາມາດໃຊ້ໄດ້ຢ່າງງ່າຍດາຍ.

*42 USC § 12101, et seq.*

## ກົດໝາຍວ່າດ້ວຍການລົງທະບຽນຜູ້ມີສິດເລືອກຕັ້ງແຫ່ງຊາດ (NVRA [National Voter Registration Act] ຫລື "ກົດໝາຍວ່າດ້ວຍຜູ້ມີສິດເລືອກຕັ້ງເຄື່ອນທີ່ (Motor Voter Act)") ປີ 1993

NVRA ເຮັດໃຫ້ການລົງທະບຽນເລືອກຕັ້ງງ່າຍຂຶ້ນສໍາລັບທ່ານ ຍ້ອນວ່າທ່ານສາມາດລົງທະບຽນໄດ້ທີ່:

- ຫ້ອງການຂອງຣັຖບ່ອນໃດກໍໄດ້ທີ່ໃຫ້ການບໍລິການຊ່ວຍເຫລືອແກ່ສາທາລະນະ
- ໂຄງການທີ່ໄດ້ຮັບທຶນຊ່ວຍເຫລືອຂອງຣັຖໂຄງການໃດກໍໄດ້ທີ່ຮັບໃຊ້ປະຊາຊົນທີ່ພິການ

ອົງການເຫລົ່ານີ້ມີຟອມລົງທະບຽນຜູ້ມີສິດເລືອກຕັ້ງທັງໝົດ. ແລະເຂົາເຈົ້າສາມາດຊ່ວຍທ່ານໃນການປະກອບຟອມແລະສົ່ງຟອມທາງໄປສະນີໄດ້.

*42 USC § 1973 (gg), et seq.*

## ກົດໝາຍວ່າດ້ວຍການເຂົ້າເຖິງການເລືອກຕັ້ງສໍາລັບຜູ້ສູງອາຍຸແລະຜູ້ພິການ (Voting Accessibility for the Elderly and Handicapped Act, VAEHA) ປີ 1984

VAEHA ເວົ້າວ່າສະຖານທີ່ລົງຄະແນນເລືອກຕັ້ງສໍາລັບການເລືອກຕັ້ງຂອງຣັຖບານກາງຕ້ອງສາມາດເຂົ້າເຖິງໄດ້ສໍາລັບທ່ານ. ຣັຖຕ້ອງຊ່ວຍເຫລືອທ່ານກ່ຽວກັບການລົງທະບຽນແລະການລົງຄະແນນສຽງ. ທ່ານຕ້ອງສາມາດເອົາຂໍ້ມູນໄດ້ທາງສາຍໂທຣ TDD/TTY. ຖ້າວ່າສະຖານທີ່ລົງຄະແນນເລືອກຕັ້ງບໍ່ສາມາດເຂົ້າເຖິງໄດ້, ເພິ່ນຕ້ອງຫາທາງອື່ນທີ່ສະດວກສໍາລັບທ່ານໃນການລົງຄະແນນສຽງ.

*42 USC § 1973 (ee), et seq.*

## ມາດຕະຖານຂອງຣັຖບານກາງສໍາລັບລະບົບການລົງຄະແນນສຽງແບບອີເລັກໂຕຣນິກ

ໃນປີ 2002, ຄະນະກໍາມະການການເລືອກຕັ້ງຂອງຣັຖບານກາງ (FEC) ເວົ້າວ່າລະບົບການເລືອກຕັ້ງທັງໝົດຈະຕ້ອງສາມາດເຂົ້າເຖິງໄດ້ສໍາລັບຜູ້ມີສິດເລືອກຕັ້ງທີ່ພິການ.

ເພື່ອຮຽນຮູ້ເພີ່ມເຕີມກ່ຽວກັບມາດຕະຖານເຫລົ່ານີ້, ຈົ່ງເບິ່ງທີ່: **www.fec.gov**

## ກົດໝາຍຂອງຣັຖຄາລີຟໍເນັຽ

ກົດໝາຍຣັຖທີ່ຄຸ້ມຄອງຜູ້ລົງຄະແນນສຽງທີ່ພິການລວມມີ:

## ລັດຖະທຳມະນູນຂອງຣັຖຄາລີຟໍເນັຽ

ລັດທຳມະນູນຂອງຣັຖຄາລີຟໍເນັຽເວົ້າວ່າການລົງຄະແນນສຽງເລືອກຕັ້ງຕ້ອງຖືກປະຕິບັດແບບເປັນຄວາມລັບ.

*California Constitution, Art. II § 7*

## ກົດໝາຍວ່າດ້ວຍການເຂົ້າເຖິງການໃຊ້ເຕັກໂນໂລຈີໃນການລົງຄະແນນສຽງ (Accessible Voting Technology Act, AVTA) ປີ 2002

AVTA ເວົ້າວ່າຜູ້ມີສິດເລືອກຕັ້ງທີ່ຕາບອດ ແລະສາຍຕາບໍ່ດີມີສິດທີ່ຈະໄປລົງຄະແນນສຽງເລືອກຕັ້ງໄດ້ໂດຍບໍ່ຕ້ອງໄດ້ຮັບການ "ຊ່ວຍເຫລືອ".

ກົດໝາຍເວົ້າວ່າທ່ານຕ້ອງ:

- ສາມາດນຳໃຊ້, ເລືອກ, ແລະຍ້າຍຂໍ້ມູນ ແລະຮູ້ຈັກລະບົບການຄວບຄຸມການລົງຄະແນນເລືອກຕັ້ງ.
- ສາມາດເຂົ້າເຖິງການລົງຄະແນນສຽງເລືອກຕັ້ງ ແລະການໃຊ້ເຕັກໂນໂລຈີໄດ້ຄືກັນກັບຜູ້ມີສິດເລືອກຕັ້ງ ທົ່ວໄປທີ່ບໍ່ໄດ້ຕາບອດຫລືສາຍຕາບໍ່ດີ.
- ມີບ່ອນເຂົ້າເຖິງໜ່ວຍລົງຄະແນນສຽງໄດ້ຢ່າງໜ້ອຍ 1 ບ່ອນທີ່ສະຖານທີ່ລົງຄະແນນເລືອກຕັ້ງຂອງທ່ານ.

*California Elections Code § 19225, et seq.*

## ຮ່າງຂໍ້ສະເໜີ 41

ຮ່າງຂໍ້ສະເໜີ 41 ໄດ້ຜ່ານຄະແນນຈາກຜູ້ມີສິດເລືອກຕັ້ງໃນປີ 2002. ຂໍ້ສະເໜີເວົ້າວ່າຄາວຕີ້ຕ່າງໆ ສາມາດຮັບເອົາເງິນ ("ທຶນຊ່ວຍເຫລືອທີ່ເໝາະສົມ") ຈາກຣັຖໄດ້ ເມື່ອເຂົາເຈົ້າຈັດຊື້ລະບົບລົງຄະແນນສຽງອັນໃໝ່. ຮ່າງຂໍ້ສະເໜີ 41 ຍັງຈັດຕັ້ງຄະນະກຳມະການປະຕິຮູບການລົງຄະແນນສຽງໃຫ້ທັນສະໄໝອີກດ້ວຍ (Voting Modernization Board).

*California Elections Code § 19230, et seq.*

# ການລົງທະບຽນເພື່ອລົງຄະແນນສຽງເລືອກຕັ້ງ

## ໃຜສາມາດລົງຄະແນນສຽງເລືອກຕັ້ງໄດ້?

ທ່ານສາມາດຈົດຊື່ລົງທະບຽນເພື່ອລົງຄະແນນເລືອກຕັ້ງໄດ້ ຖ້າວ່າທ່ານ:

- ເປັນພົນລະເມືອງອາເມລິກັນ,
- ເປັນຜູ້ຢູ່ອາໄສໃນຣັຖຄາລີຟໍເນັຽ,
- ມີອາຍຸຢ່າງໜ້ອຍ 18 ປີ,
- ບໍ່ຕິດຄຸກ ຫລືຢູ່ໃນສະພາບຖືກປ່ອຍໂຕໂດຍມີເງື່ອນໄຂສໍາລັບໂທດກະທໍາຜິດທາງອາຍາ, ແລະ
- ບໍ່ຖືກຄົ້ນພົບຈາກສານວ່າ "ບໍ່ຜິດດ້ວຍເຫດຜົນຂອງຄວາມເປັນບ້າ," "ຂາດຄວາມສາມາດທີ່ຈະຢູ່ໃນ ການໄຕ່ສວນຄະດີ," "ເປັນຜູ້ກະທໍາຜິດທາງເພດທີ່ເປັນໂຣກຈິດ" ຫລື "ເປັນນັກໂທດທີ່ເປັນໂຣກຈິດ". ນອກຈາກນີ້, ບຸກຄົນອື່ນໆທີ່ຢູ່ພາຍໃຕ້ການຄວບຄຸມທາງກົດໝາຍ ອາດບໍ່ມີສິດເໝາະສົມ ຖ້າຫາກ ສານຄົ້ນພົບວ່າ ບຸກຄົນນັ້ນບໍ່ສາມາດປະກອບຄໍາໃຫ້ການທີ່ເປັນລາຍລັກອັກສອນຂອງການລົງທະບຽນ ສໍາລັບຜູ້ມີສິດເລືອກຕັ້ງ ແລະໂດຍສະເພາະແມ່ນ ຖອນສິດໃນການອອກສຽງເລືອກຕັ້ງໃນເອກະສານ ການຄວບຄຸມທາງກົດໝາຍ. ໃຫ້ເບິ່ງເອກະສານ PAI ທີ່ຊື່ວ່າ Right to Vote When You are in a Facility or Under a Conservatorship ສິດທິໃນການອອກສຽງເລືອກຕັ້ງເມື່ອທ່ານຢູ່ໃນສະຖານພະຍາບານ ຫລືຢູ່ພາຍໃຕ້ການຄວບຄຸມທາງກົດໝາຍ ທີ່ http://www.pai-ca.org/pubs/541401.htm ເພື່ອຊາບລາຍລະອຽດເພີ້ມເຕີມ.

## ວິທີການລົງທະບຽນ

ຖ້າວ່າທ່ານມີເງື່ອນໄຂກົງຕາມຂໍ້ກໍານົດເຫລົ່ານີ້, ທ່ານສາມາດຂໍເອົາຟອມລົງທະບຽນເລືອກຕັ້ງແລະປະກອບຟອມນັ້ນໄດ້. ຈົ່ງສົ່ງຟອມກັບຄືນໄປທີ່ຫ້ອງການການເລືອກຕັ້ງປະຈໍາຄາວຕີ້ຂອງທ່ານ ຫລືຫ້ອງການເລຂາທິການຣັຖ. ທ່ານສາມາດສົ່ງຟອມທາງໄປສະນີໄດ້ຟຣີ.

ທ່ານຕ້ອງປະກອບຂໍ້ມູນດັ່ງຕໍ່ໄປນີ້ໃສ່ໃນຟອມລົງທະບຽນ:

- ຊື່ຂອງທ່ານ.
- ທີ່ຢູ່ທາງໄປສະນີ. ຖ້າວ່າທ່ານບໍ່ມີເຮືອນຢູ່, ໃຫ້ຂຽນທີ່ຢູ່ບ່ອນໃດໜຶ່ງທີ່ທ່ານສາມາດຮັບຈົດໝາຍໄດ້. ທີ່ຢູ່ນີ້ອາດແມ່ນຫ້ອງການໄປສະນີ, ເຮືອນຂອງເພື່ອນຫລືຂອງຍາດພີ່ນ້ອງ, ບ່ອນຢູ່ຊົ່ວຄາວຂອງຄົນບໍ່ມີບ້ານຢູ່ ຫລືອົງການສັງຄົມສົງເຄາະ.
- ທີ່ຢູ່ໃນເຂດບ່ອນຢູ່ອາໄສ. ຂໍ້ມູນນີ້ຈໍາເປັນຕ້ອງໄດ້ນໍາໃຊ້ເພື່ອກໍານົດສະຖານທີ່ລົງຄະແນນເລືອກຕັ້ງສໍາລັບທ່ານ (ສະຖານທີ່ທີ່ທ່ານໄປລົງຄະແນນເລືອກຕັ້ງ). ທ່ານສາມາດໃຊ້ທີ່ຢູ່ສີ່ແຍກຖະໜົນກໍໄດ້ ຖ້າວ່າທ່ານບໍ່ມີບ້ານຢູ່.
- ໃບຂັບຂີ່ຂອງຣັຖຄາລີຟໍເນັຽ ຫລືບັດປະຈໍາຕົວຣັຖຄາລີຟໍເນັຽ. ຖ້າວ່າທ່ານບໍ່ມີໃບຂັບຂີ່ ຫລືບັດປະຈໍາຕົວ, ໃຫ້ໃຊ້ໂຕເລກສີ່ໂຕສຸດທ້າຍຂອງເລກປະກັນສັງຄົມຂອງທ່ານ (ເລກໂຊໂຊ).
- ທ່ານຕ້ອງເຊັນຊື່ໃສ່ໃນຟອມແລະສາບານວ່າຂໍ້ມູນໃນຟອມທັງໝົດຖືກຕ້ອງ.

ທ່ານຈະໄດ້ຮັບບັດແຈ້ງຜູ້ມີສິດເລືອກຕັ້ງໂດຍທາງໄປສະນີປະມານ 2 ອາທິດ ຫລັງຈາກທ່ານລົງທະບຽນແລ້ວ. ຢ່າລືມກວດເບິ່ງໃຫ້ແນ່ໃຈວ່າຂໍ້ມູນທີ່ທ່ານໃຫ້ນັ້ນຖືກຕ້ອງໝົດ. ຈົ່ງບອກໃຫ້ທາງຫ້ອງການການເລືອກຕັ້ງຮູ້ ຖ້າວ່າມີຂໍ້ຜິດພາດຢູ່ໃນບັດ.

## ຈະຂໍເອົາຟອມລົງທະບຽນໄດ້ຢູ່ໃສ

ມີຫລາຍວິທີການທີ່ຈະຂໍເອົາຟອມລົງທະບຽນ.

- ໂທຣ **1-800-345-VOTE (8683)** (ສຽງອັດ ຫລື **TDD/TTY**). ຈົ່ງຂໍໃຫ້ເຂົາເຈົ້າສົ່ງຟອມໃຫ້ທ່ານທາງໄປສະນີ.
- ຈົ່ງຕິດຕໍ່ຫ້ອງການການເລືອກຕັ້ງປະຈຳຄາວຕີ້ຂອງທ່ານ. ເບິ່ງໜ້າ 16.
- ໄປຮັບຟອມໄດ້ທີ່:
  - ຫ້ອງສະໝຸດ
  - ຫ້ອງການໄປສະນີ
  - ຫ້ອງການ PAI
  - ສູນພູມີພາກ
  - ກົມຂັບຂີ່ຣົຖ (DMV)
  - ອົງການສຸຂະພາບຈິດປະຈຳຄາວຕີ້
  - ຫ້ອງການສະໝຽນຂອງເມືອງ ຫລືຂອງຄາວຕີ້
- ລົງທະບຽນໄດ້ທາງອອນລາຍທີ່ເວັບໄຊຂອງສຳນັກງານເລຂາທິການຣັຖ:
  www.sos.ca.gov/elections/elections.htm
  ກົດທີ່ "Fill out a Voter Registration Form Online" (ປະກອບຟອມລົງທະບຽນຜູ້ມີສິດເລືອກຕັ້ງທາງອອນລາຍ).
- ເອີ້ນເອົາຟອມຈາກເວັບໄຊຂອງສຳນັກງານເລຂາທິການຣັຖ. ຈົ່ງປະກອບຟອມນັ້ນແລ້ວສົ່ງກັບຄືນທາງໄປສະນີໂດຍສົ່ງໄປທີ່:

  Secretary of State
  1500 11th Street
  Sacramento, CA 95814

## ລົງທະບຽນເມື່ອໃດ

ໃນຣັຖຄາລີຟໍເນັຽ, ທ່ານຕ້ອງຈົດຊື່ລົງທະບຽນເພື່ອເລືອກຕັ້ງຢ່າງໜ້ອຍ 15 ວັນກ່ອນເຖິງວັນເລືອກຕັ້ງ.

## ຂ້າພະເຈົ້າຕ້ອງລົງທະບຽນອີກບໍ່?

ທ່ານຕ້ອງລົງທະບຽນອີກ**ສະເພາະ**ຖ້າວ່າທ່ານ:

- ຍ້າຍ,
- ປ່ຽນນຊື່ໃໝ່,
- ປ່ຽນພັກການເມືອງຂອງທ່ານໃໝ່,
- ໄດ້ສິດທິຂອງທ່ານກັບຄືນຫລັງຈາກອອກຈາກຄຸກ ຫລືອອກຈາກສະພາບການຖືກປ່ອຍໂຕ ສຳລັບການກະທຳຜິດທາງອາຍາ, ຫລື
- ໄດ້ສິດທິຂອງທ່ານກັບຄືນ ຫລັງຈາກອອກຈາກການຄຸ້ມຄອງ ເຊິ່ງໄດ້ຖອນສິດຂອງທ່ານໃນການອອກສຽງເລືອກຕັ້ງ.

## ຕ້ອງການການຊ່ວຍເຫລືອໃນການລົງທະບຽນຜູ້ມີສິດເລືອກຕັ້ງບໍ່?

ທ່ານສາມາດຂໍເອົາການຊ່ວຍເຫລືອເລື່ອງການລົງທະບຽນຜູ້ມີສິດເລືອກຕັ້ງໄດ້ ຈາກຫ້ອງການຂອງສຳນັກງານເລຂາທິການຣັຖ, ສູນພູມີພາກ DDS, ອົງການສຸຂະພາບຈິດປະຈຳຄາວຕີ້, ແລະ PAI. ຂໍ້ມູນສຳລັບຕິດຕໍ່ຂອງເຂົາເຈົ້າມີຢູ່ຂ້າງລຸ່ມນີ້.

## ຫ້ອງການຂອງສຳນັກງານເລຂາທິການຣັຖ

ສຳລັບຄຳຖາມ ຫລືການຊ່ວຍເຫລືອກ່ຽວກັບການຈົດຊື່ລົງທະບຽນສຳລັບຜູ້ລົງຄະແນນເລືອກຕັ້ງ, ຈົ່ງໂທຣຕິດຕໍ່ຕາມເລກໂທຣຂ້າງລຸ່ມນີ້:

| | |
|---|---|
| ອັງກິດ: | 1-800-345-VOTE (8683) ສຽງອັກຫລື TTD/TTY |
| ສະເປນ: | 1-800-232-VOTA (8682) |
| ຈີນ: | 1-800-339-2857 |
| ວຽດນາມ: | 1-800-339-8163 |
| ຍີ່ປຸ່ນ: | 1-800-339-2865 |
| ຕາກາລັອກ: | 1-800-339-2957 |
| ເກົາຫລີ: | 1-866-575-1558 |

## ສູນພູມີພາກຂອງ DDS

ກົດໝາຍເວົ້າວ່າພະແນກການບໍລິການດ້ານການພັດທະນາຂອງຣັຖຄາລີຟໍເນັຽ (DDS) ຕ້ອງໃຫ້ຂໍ້ມູນແກ່ທ່ານ ແລະຊ່ວຍເຫລືອທ່ານກ່ຽວກັບເລື່ອງການລົງທະບຽນຜູ້ມີສິດເລືອກຕັ້ງ. DDS ມີສູນພູມີພາກ 21 ບ່ອນໃນຣັຖຄາລີຟໍເນັຽ. ສູນພູມີພາກປະຈຳເຂດຂອງທ່ານສາມາດຊ່ວຍເຫລືອທ່ານໄດ້.

ສຳລັບຂໍ້ມູນເພີ່ມເຕີມ, ຈົ່ງອ່ານ:

- Regional Center: Responsibility to Assist Regional Center Clients with Voter Registration (ສູນພູມີພາກ: ຮັບຜິດຊອບໃນການຊ່ວຍເຫລືອຜູ້ຮັບບໍລິການຂອງສູນພູມີພາກກ່ຽວກັບການລົງທະບຽນຜູ້ມີສິດເລືອກຕັ້ງ)
- Voter Registration for Regional Center Clients (ການລົງທະບຽນຜູ້ມີສິດເລືອກຕັ້ງສຳລັບຜູ້ຮັບບໍລິການຂອງສູນພູມີພາກ)

ທ່ານສາມາດຂໍເອົາຂໍ້ມູນຕີພິມເຫລົ່ານີ້ໄດ້ຈາກ PAI ທີ່: **www.pai-ca.org**; ຫລືໂທຣໄປທີ່ PAI. ເບິ່ງໜ້າ 9 ສຳລັບຫ້ອງການທີ່ຢູ່ໃກ້ທ່ານ.

## ອົງການສຸຂະພາບຈິດປະຈຳຄາວຕີ້

ໂຄງການທີ່ໄດ້ທຶນຊ່ວຍເຫລືອຈາກຫລວງທັງໝົດ ທີ່ຮັບໃຊ້ປະຊາຊົນທີ່ພິການຈະຕ້ອງໃຫ້ບໍລິການກ່ຽວກັບ ການລົງທະບຽນເລືອກຕັ້ງ. ອັນນີ້ລວມເຖິງອົງການສຸຂະພາບຈິດປະຈຳຄາວຕີ້ ແລະໂຮງໝໍຂອງຣັຖ.

ສຳລັບຂໍ້ມູນເພີ່ມເຕີມ, ອ່ານທີ່:

- "Right to Vote When You are in a Facility or Under a Conservatorship"

ທ່ານສາມາດຂໍເອົາຂໍ້ມູນຕີພິມນີ້ໄດ້ຈາກ PAI ທີ່: **www.pai-ca.org**; ຫລືໂທຣຫາ PAI. ເບິ່ງຂ້າງລຸ່ມກ່ຽວກັບຫ້ອງການທີ່ຢູ່ໃກ້ທ່ານ.

## ຫ້ອງການຂອງ **Protection & Advocacy, Inc.**

Protection & Advocacy, Inc.
100 Howe Avenue, Suite 235-N
Sacramento, CA 95825
ໂທຣຟຣີ: 800-776-5746
ໂທຣະສັບ: 916-488-9950
ແຟກຊ: 916-488-9960
TTY: 800-719-5798

Protection & Advocacy, Inc.
1330 Broadway, Suite 500
Oakland, CA 94612
ໂທຣຟຣີ: 800-776-5746
ໂທຣະສັບ: 510-267-1200
ແຟກຊ: 510-267-1201
TTY: 800-641-0154

Protection & Advocacy, Inc.
3580 Wilshire Blvd., Suite 902
Los Angeles, CA 90010
ໂທຣຟຣີ: 800-776-5746
ໂທຣະສັບ: 213-427-8747
ແຟກຊ: 213-427-8767
TTY: 800-781-4546

Protection & Advocacy, Inc.
1111 Sixth Avenue, Suite 200
San Diego, CA 92101
ໂທຣຟຣີ: 800-776-5746
ໂທຣະສັບ: 619-239-7861
ແຟກຊ: 619-239-7906
TTY: 800-576-9569

# ອຸປະກອນຕ່າງໆເພື່ອຊ່ວຍທ່ານໃນການລົງຄະແນນສຽງເລືອກຕັ້ງ

## ບັດເລືອກຕັ້ງຕົວຢ່າງແລະປື້ມນ້ອຍກ່ຽວກັບບັດເລືອກຕັ້ງຂອງຣັຖຄາລິຟໍເນັຽ

ປະມານ 6 ອາທິດກ່ອນເຖິງວັນເລືອກຕັ້ງ, ທາງຫ້ອງການການເລືອກຕັ້ງປະຈຳຄາວຕີ້ຈະສົ່ງຕົວຢ່າງບັດເລືອກຕັ້ງໃຫ້ທ່ານທາງໄປສະນີ. ບັດນີ້ມີຂໍ້ມູນກ່ຽວກັບຜູ້ສະມັກຮັບເລືອກຕັ້ງແລະປະເດັນຕ່າງໆ. ທ່ານຍັງຈະໄດ້ຮັບປື້ມນ້ອຍກ່ຽວກັບບັດເລືອກຕັ້ງຄາລິຟໍເນັຽເຊິ່ງມີຂໍ້ມູນຕື່ມໃຫ້ອີກ.

ຖ້າວ່າທ່ານລົງທະບຽນໃກ້ຮອດວັນເລືອກຕັ້ງ, (15-29 ວັນກ່ອນ), ກໍອາດຈະບໍ່ມີເວລາພໍທີ່ຈະສົ່ງຂໍ້ມູນເຫລົ່ານີ້ໃຫ້ທ່ານໄດ້. ທ່ານຈະໄດ້ຮັບໄປສະນີບັດທີ່ບອກວ່າທ່ານໄດ້ລົງທະບຽນແລ້ວ. ທ່ານສາມາດຮັບເອົາປື້ມນ້ອຍກ່ຽວກັບການເລືອກຕັ້ງໄດ້ທີ່ຫ້ອງສະໝຸດຫລືທາງອອນລາຍທີ່:
www.sos.ca.gov/elections/elections_i.htm

## ຈະເຮັດແນວໃດ ຖ້າວ່າຂ້າພະເຈົ້າມີບັນຫາຫຍຸ້ງຍາກໃນການເບິ່ງເຫັນ, ການອ່ານ ຫລືການເຂົ້າໃຈພາສາອັງກິດ?

ທ່ານສາມາດຂໍເອົາເທັບຟັງກ່ຽວກັບບັດເລືອກຕັ້ງໄດ້. ເທັບນີ້ມີໃຫ້ຟຣີທີ່:

- ຫ້ອງສະໝຸດ
- ສະຖາບັນພາສາເບຣລ
- ຫ້ອງການເລືອກຕັ້ງປະຈຳຄາວຕີ້
- ເວັບໄຊຂອງສຳນັກງານເລຂາທິການຣັຖ:
  www.sos.ca.gov/elections/elections_dis.htm
- ຫ້ອງການຂອງສຳນັກງານເລຂທິການຣັຖ:
  1-800-345-VOTE (8683) (ສຽງອັດ ຫລື TDD/TTY)

## ປື້ມນ້ອຍກ່ຽວກັບບັດເລືອກຕັ້ງທີ່ບໍ່ແມ່ນພາສາອັງກິດ

ທ່ານສາມາດຂໍເອົາປື້ມກ່ຽວກັບການເລືອກຕັ້ງເປັນພາສາອື່ນໄດ້ນອກຈາກພາສາອັງກິດ. ຈົ່ງຕິດຕໍ່ຫ້ອງການການເລືອກຕັ້ງປະຈຳຄາວຕີ້ ເພື່ອຖາມເບິ່ງວ່າຄາວຕີ້ຂອງທ່ານມີພາສາຫຍັງແດ່.

ປື້ມນ້ອຍກ່ຽວກັບບັດເລືອກຕັ້ງຂອງຣັຖຄາລິຟໍເນັຽມີໃຫ້ທ່ານໃນພາສາອັງກິດ, ສະເປນ, ຈີນ, ຍີ່ປຸ່ນ, ເກົາຫລີ, ຕາກາລັອກ ແລະວຽດນາມ. ທ່ານສາມາດຮັບເອົາປື້ມບັດເລືອກຕັ້ງໄດ້ທາງອອນລາຍທີ່: www.voterguide.sos.ca.gov

## ຄູ່ມືສຳລັບຜູ້ມີສິດເລືອກຕັ້ງແບບງ່າຍ

ທ່ານຍັງສາມາດຮັບເອົາ**ຄູ່ມືສຳລັບຜູ້ມີສິດເລືອກຕັ້ງແບບງ່າຍ**ໄດ້. ປື້ມນີ້ມີຂໍ້ມູນທີ່ຈະແຈ້ງແລະອ່ານງ່າຍກ່ຽວກັບບັດເລືອກຕັ້ງແລະການເລືອກຕັ້ງຂອງຣັຖຄາລິຟໍເນັຽ. ປື້ມນີ້ມີໃນຮູບພາສາອັງກິດ, ພາສາອື່ນໆ, ເທັບແລະໂຕພິມຂະໜາດໃຫຍ່.

**ຄູ່ມືສຳລັບຜູ້ມີສິດເລືອກຕັ້ງແບບງ່າຍ**ມີ:

- ຄຳປາໃສຈາກພັກການເມືອງແຕ່ລະພັກ
- ຄຳປາໃສແລະຮູບພາບຂອງຜູ້ສະມັກຮັບເລືອກຕັ້ງ
- ຄຳອະທິບາຍກ່ຽວກັບມາດຕະການດ້ານການລົງຄະແນນສຽງໃນບັດລັບ (ຮ່າງຂໍ້ສະເໜີຕ່າງໆ)
- ຂໍ້ມູນກ່ຽວກັບການລົງທະບຽນແລະການເລືອກຕັ້ງ

ເພື່ອຂໍເອົາ**ຄູ່ມືສຳລັບຜູ້ມີສິດເລືອກຕັ້ງແບບງ່າຍ:**

- ເອີ້ນເອົາຄູ່ມືທີ່ເວັບໄຊ www.easyvoter.org. ມັນມີໜ້າຈໍທີ່ອ່ານງ່າຍ.
- ຮັບເອົາສຳເນົາຂໍ້ມູນໄດ້ຟຣີທີ່ຫ້ອງສະໝຸດ.
- ຕິດຕໍ່ຫ້ອງການການເລືອກຕັ້ງປະຈຳຄາວຕີ້ຂອງທ່ານ.
- ທ່ານຍັງສາມາດຂໍເອົາຄູ່ມືໃນຮູບຂອງເທັບຟັງ ຫລືໂຕພິມໃຫຍ່ໄດ້. ຈົ່ງຕິດຕໍ່:

  Easy Voter Guide
  League of Women Voters of California
  801 12th Street, Suite #220
  Sacramento, CA 95814
  ໂທຣ: 916-442-7215 (ມີສະເພາະສຽງອັດເທົ່ານັ້ນ, ບໍ່ມີສາຍໂທຣ TDD/TTY)
  ແຟກຊ: 916-442-7362
  Email : lwvc@lwvc.org
  http://ca.lwvc.org

# ວິທີການລົງຄະແນນສຽງເລືອກຕັ້ງ

## ຂ້າພະເຈົ້າຈະໄປລົງຄະແນນສຽງຢູ່ບ່ອນໃດ?



ການໄປລົງຄະແນນສຽງທີ່ສະຖານທີ່ລົງຄະແນນເລືອກຕັ້ງຂອງທ່ານ. ມັນເປີດແຕ່ເວລາ 7 ໂມງເຊົ້າ ຫາ 8 ໂມງແລງ ໃນວັນເລືອກຕັ້ງ. ຈົ່ງກວດເບິ່ງຕົວຢ່າງບັດເລືອກຕັ້ງຂອງທ່ານ ຫລືໄປສະນີບັດທີ່ສົ່ງໃຫ້ທ່ານເຊິ່ງບອກວ່າທ່ານໄດ້ລົງທະບຽນແລ້ວ. ໃນນັ້ນຈະບອກທ່ານກ່ຽວກັບສະຖານທີ່ລົງຄະແນນສຽງເລືອກຕັ້ງ.

## ສະຖານທີ່ລົງຄະແນນເລືອກຕັ້ງຂອງຂ້າພະເຈົ້າມີທາງເຂົ້າເຖິງໄດ້ບໍ່?

ບາງເທື່ອອາດມີ. ຈົ່ງຊອກເບິ່ງຮູບສັນຍະລັກຣົຖລໍ້ສີຟ້າຢູ່ທາງຫລັງຂອງບັດເລືອກຕັ້ງຕົວຢ່າງ. ຖ້າວ່າມີຮູບຣົຖລໍ້ສີຟ້າ, ນັ້ນກໍໝາຍຄວາມວ່າສະຖານທີ່ລົງຄະແນນເລືອກຕັ້ງຂອງທ່ານນັ້ນ**ສາມາດເຂົ້າເຖິງໄດ້.**

ຕາມກົດໝາຍແລ້ວ, ແຕ່ລະຣັຖຕ້ອງມີຂໍ້ມູນແນະນຳກ່ຽວກັບສະຖານທີ່ປ່ອນບັດທີ່ສາມາດເຂົ້າເຖິງໄດ້. ທ່ານສາມາດກວດເບິ່ງລາຍການສະຖານທີ່ປ່ອນບັດທີ່ຈັດຕຽມໂດຍກະຊວງຍຸດຕິທັມແຫ່ງສະຫະຣັຖອາເມລິກາທີ່:
**www.usdoj.gov/crt/ada/votingck.htm**

ສຳນັກງານເລຂາທິການຣັຖມີ **Polling Place Accessibility Checklist** **(ລາຍຊື່ສະຖານທີ່ລົງຄະແນນເລືອກຕັ້ງທີ່ສາມາດເຂົ້າເຖິງໄດ້)** ຂອງຣັຖຄາລີຟໍເນັຽ. ຈົ່ງເອີ້ນເອົາລາຍຊື່ສະຖານທີ່ໄດ້ຈາກເວັບໄຊ:
**www.sos.ca.gov/elections/access_check.pdf**

ຫລື, ຈົ່ງຂໍຮ້ອງຫ້ອງການຂອງສຳນັກງານເລຂາທິການຣັຖເພື່ອໃຫ້ສົ່ງສຳເນົາລາຍຊື່ສະຖານທີ່ໃຫ້ທ່ານ:
**1-800-345-VOTE (8683)** – ສຽງອັດ ຫລື TDD/TTY

ສະຖານທີ່ລົງຄະແນນເລືອກຕັ້ງທີ່ສາມາດເຂົ້າເຖິງໄດ້ມີ:

- ບ່ອນຈອດຣົຖທີ່ສາມາດເຂົ້າເຖິງໄດ້ທີ່ໝາຍໄວ້ໃກ້ທາງເຂົ້າ
- ທາງຍ່າງທີ່ເຮັດໃຫ້ເຫັນຢ່າງຈະແຈ້ງຈາກບ່ອນຈອດຣົຖໄປຫາບ່ອນປ່ອນບັດເລືອກຕັ້ງ
  ປະຕູທີ່ກວ້າງແລະເປີດໄດ້ງ່າຍ
- ອຸປະກອນຊ່ວຍໃນການເລືອກຕັ້ງ ແລະປ້າຍຕ່າງໆເຊິ່ງຂຽນໂຕໃຫຍ່
- ພະນັກງານທີ່ເຮັດວຽກຢູ່ບ່ອນເລືອກຕັ້ງເພື່ອຊ່ວຍທ່ານ ແລະຕອບຄຳຖາມຂອງທ່ານ

ຖ້າວ່າສະຖານທີ່ລົງຄະແນນເລືອກຕັ້ງຂອງທ່ານບໍ່ສາມາດເຂົ້າເຖິງໄດ້ ຫລືບໍ່ສາມາດເຂົ້າໄປທີ່ບ່ອນລົງຄະແນນໄດ້, ທ່ານສາມາດ:

- ລົງຄະແນນສຽງໄດ້ໂດຍໃຊ້ບັດເລືອກຕັ້ງສໍາລັບຜູ້ບໍ່ມາກ່ອນທີ່ຈະເຖິງວັນເລືອກຕັ້ງ.
- ຂໍໄປລົງຄະແນນສຽງທີ່ສະຖານທີ່ລົງຄະແນນເລືອກຕັ້ງທີ່ສາມາດເຂົ້າເຖິງໄດ້ທີ່ຢູ່ໃກ້ທ່ານ.
- ໃຊ້ "ການເລືອກຕັ້ງຂ້າງຂອບຖະໜົນ". ຖ້າວ່າທ່ານບໍສາມາດມາທີ່ສະຖານທີ່ລົງຄະແນນໄດ້, ພະນັກງານດູແລການເລືອກຕັ້ງຈະນໍາເອົາບັດລົງຄະແນນສຽງໄປໃຫ້ທ່ານຢູ່ທີ່ຂອບຖະໜົນ ຫລືທີ່ຣົຖຂອງທ່ານ.
- ຈົ່ງໂທຣຫາຫ້ອງການການເລືອກຕັ້ງປະຈໍາຄາວຕີ້ຂອງທ່ານ ຫລືຫ້ອງການ PAI ຖ້າວ່າທ່ານມີຄໍາຖາມໃດໆ.

## ໃນຫ້ອງລົງຄະແນນສຽງ

ເຖິງແມ່ນວ່າສະຖານທີ່ລົງຄະແນນສຽງຂອງທ່ານສາມາດເຂົ້າເຖິງໄດ້, ລະບົບການເລືອກຕັ້ງຂອງທ່ານກໍ່ອາດເຂົ້າເຖິງບໍ່ໄດ້. ກົດໝາຍຣັຖບານກາງເວົ້າວ່າຜູ້ມີສິດເລືອກຕັ້ງທີ່ພິການຕ້ອງສາມາດເຂົ້າເຖິງລະບົບລົງຄະແນນສຽງໄດ້ບໍ່ເກີນປີ 2006. PAI ຄາດໝາຍວ່າບ່ອນເລືອກຕັ້ງຈະຕ້ອງມີລະບົບລົງຄະແນນສຽງທີ່ສາມາດເຂົ້າເຖິງໄດ້ໃນວັນນັ້ນ.

ທ່ານມີສິດທີ່ຈະເລືອກຕັ້ງຢ່າງເປັນຄວາມລັບ ແລະໂດຍວິທີການງ່າຍໆ. ສະຖານທີ່ລົງຄະແນນເລືອກຕັ້ງສ່ວນຫລາຍຈະມີອຸປະກອນເຫລົ່ານີ້ເພື່ອຊ່ວຍເຫລືອທ່ານ:

- ຫ້ອງລົງຄະແນນສຽງທີ່ມີໂຕະສູງ (ສໍາລັບໃຫ້ຣົຖລໍ້ເຂົ້າເຖິງໄດ້)
- ຄໍາແນະນໍາທີ່ພິມໂຕໃຫຍ່ແລະເປັນພາສາເບຣລ
- ແວ່ນຂະໜາດໃຫຍ່
- ຮູບພາບທີ່ຊ່ວຍອະທິບາຍລະບົບການລົງຄະແນນສຽງ
- ປາກກາໃຫຍ່ສໍາລັບໝາຍບັດເຊິ່ງໃຊ້ງ່າຍ

## ຂ້າພະເຈົ້າສາມາດໃຫ້ຜູ້ອື່ນມາຊ່ວຍໃນການລົງຄະແນນສຽງໄດ້ບໍ່?

ໄດ້. ທ່ານສາມາດ:

- ເລືອກ 1 ຫລື 2 ຄົນມາຊ່ວຍທ່ານໃນຫ້ອງລົງຄະແນນສຽງ. ແຕ່, ທ່ານບໍ່ສາມາດເລືອກນາຍຈ້າງຂອງທ່ານຫລືເຈົ້າໜ້າທີ່ສະຫະພາບແຮງງານໄດ້.
- ຈົ່ງຂໍໃຫ້ພະນັກງານດູແລການເລືອກຕັ້ງມາຊ່ວຍທ່ານ. ແຕ່, ເຂົາເຈົ້າຈະຕ້ອງບໍ່ມີອິດທິພົນຕໍ່ການເລືອກຂອງທ່ານ, ແລະເຂົາເຈົ້າບໍ່ສາມາດບອກຜູ້ອື່ນກ່ຽວກັບການເລືອກຂອງທ່ານໄດ້.
- ຈົ່ງຂໍໃຫ້ນາຍພາສາໃບ້ມາຊ່ວຍທ່ານ. ທ່ານສາມາດພານາຍພາສາຂອງທ່ານເອງມາໄດ້ ຫລືໂທຣຫາຫ້ອງການການເລືອກຕັ້ງປະຈໍາຄາວຕີ້ກ່ອນເຖິງວັນເລືອກຕັ້ງເພື່ອຂໍເອົານາຍພາສາ ASL ມາຊ່ວຍທ່ານ.



ທ່ານຍັງສາມາດພາສັດລ້ຽງນໍາທາງໄປທີ່ສະຖານທີ່ເລືອກຕັ້ງແລະພາເຂົ້າໄປໃນຫ້ອງລົງຄະແນນສຽງໄດ້.

# ການລົງຄະແນນສຽງເລືອກຕັ້ງໂດຍໃຊ້ບັດລົງຄະແນນສຳລັບຜູ້ບໍ່ມາ

ບັດເລືອກຕັ້ງສຳລັບຜູ້ບໍ່ມາແມ່ນອານຸຍາດໃຫ້ທ່ານເລືອກຕັ້ງໄດ້ທາງໄປສະນີ. ຖ້າວ່າສະຖານທີ່ລົງຄະແນນເລືອກຕັ້ງຂອງທ່ານ ບໍ່ສາມາດເຂົ້າເຖິງໄດ້, ຫລືທ່ານບໍ່ສາມາດເຂົ້າໄປໄດ້, ທ່ານສາມາດເລືອກຕັ້ງແບບຜູ້ບໍ່ມາໄດ້.

ແຕ່ວ່າທ່ານຕ້ອງສະມັກຂໍເອົາບັດເລືອກຕັ້ງສຳລັບຜູ້ບໍ່ມາຢ່າງໜ້ອຍ 7 ວັນ**ກ່ອນ**ເຖິງການເລືອກຕັ້ງຄັ້ງຕໍ່ໄປ. ປື້ມຕົວຢ່າງບັດເລືອກຕັ້ງມີໃບສະມັກຢູ່ໃນນັ້ນດ້ວຍ. ຫລືທ່ານສາມາດຕິດຕໍ່ຫ້ອງການການເລືອກຕັ້ງປະຈຳຄາວຕີ້ຂອງທ່ານໄດ້. ເບິ່ງໜ້າ 16.

ຈົ່ງສົ່ງບັດເລືອກຕັ້ງສຳລັບຜູ້ບໍ່ມາຂອງທ່ານທາງໄປສະນີ ຫລືໄປສົ່ງທີ່ຫ້ອງການການເລືອກຕັ້ງປະຈຳຄາວຕີ້ ຫລືທີ່ສະຖານທີ່ເລືອກຕັ້ງບ່ອນໃດກໍໄດ້ໃນຄາວຕີ້ທີ່ທ່ານໄດ້ລົງທະບຽນເພື່ອເລືອກຕັ້ງ.

ບັດເລືອກຕັ້ງຕ້ອງມາຮອດບໍ່ເກີນ 8 ໂມງແລງຂອງວັນເລືອກຕັ້ງ. ຖ້າວ່າມັນມາຊ້າ, ບັດນັ້ນກໍຈະບໍ່ຖືກນັບລວມ.

## ຂ້າພະເຈົ້າຕ້ອງສະມັກຂໍເອົາບັດເລືອກຕັ້ງສຳລັບຜູ້ບໍ່ມາກ່ອນເຖິງວັນເລືອກຕັ້ງທຸກຄັ້ງແມ່ນບໍ່?

ແມ່ນ, ເວັ້ນເສັຽແຕ່ທ່ານສະມັກຂໍຢູ່ໃນຖານະເປັນຜູ້ບໍ່ມາແບບຖາວອນ. ຖານະການເປັນຜູ້ບໍ່ມາຖາວອນໝາຍເຖິງວ່າ ບັດເລືອກຕັ້ງສຳລັບຜູ້ບໍ່ມາຈະຖືກສົ່ງໃຫ້ທ່ານໂດຍອັດຕະໂນມັດກ່ອນການເລືອກຕັ້ງທຸກຄັ້ງ.

ແຕ່ຖ້າວ່າ ທ່ານບໍ່ອອກສຽງເລືອກຕັ້ງໂດຍໃຊ້ບັດເລືອກຕັ້ງສຳລັບຜູ້ບໍ່ມາໃນການເລືອກຕັ້ງທົ່ວໄປທົ່ວຣັຖເຖິງສອງ (2) ຄັ້ງຕິດຕໍ່ກັນ, ຊື່ຂອງທ່ານຈະຖືກລົບອອກຈາກລາຍຊື່ຜູ້ມີສິດອອກສຽງເລືອກຕັ້ງສຳລັບຜູ້ບໍ່ມາ. ກົດໝາຍນີ້ແມ່ນມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 1 ມົກຣາ 2006 ເປັນຕົ້ນໄປ (SB 39).

ເພື່ອສະມັກຢູ່ໃນຖານະຜູ້ບໍ່ມາຖາວອນ, ຈົ່ງໃຊ້ໃບສະມັກໃນປື້ມບັດຕົວຢ່າງ, ຫລືໂທຣຫາຫ້ອງການການເລືອກຕັ້ງປະຈຳຄາວຕີ້ຂອງທ່ານ.

## ຈະເຮັດແນວໃດ ຖ້າວ່າຂ້າພະເຈົ້າເຮັດບັດເລືອກຕັ້ງສຳລັບຜູ້ບໍ່ມາເສັຽ ຫລືລືມສົ່ງບັດທາງໄປສະນີໃຫ້ທັນເວລາ?

ຖ້າວ່າທ່ານເຮັດບັດເລືອກຕັ້ງສຳລັບຜູ້ບໍ່ມາເສັຽ, ທ່ານສາມາດເລືອກຕັ້ງໄດ້ໂດຍໃຊ້ບັດເລືອກຕັ້ງຊົ່ວຄາວໃນວັນເລືອກຕັ້ງທີ່ສະຖານທີ່ລົງຄະແນນເລືອກຕັ້ງຂອງທ່ານ. ຫລືຮ້ອງຂໍເອົາບັດໃໝ່ໃນວັນເລືອກຕັ້ງ, ໂດຍການໂທຣຫາຫ້ອງການການເລືອກຕັ້ງປະຈຳຄາວຕີ້.

ຖ້າວ່າທ່ານບໍ່ໄດ້ສົ່ງບັດເລືອກຕັ້ງຂອງທ່ານທັນເວລາ, ຈົ່ງຢ່າລືມປະກອບຂໍ້ມູນທຸກຢ່າງໃນບັດເລືອກຕັ້ງແລະໜ້າຊອງຈົດໝາຍ. ຈາກນັ້ນ, ໃນວັນເລືອກຕັ້ງໃຫ້ທ່ານ ຫລືໃຜຜູ້ໜຶ່ງທີ່ທ່ານເລືອກໃຫ້ເອົາຊອງເລືອກຕັ້ງໄປທີ່ສະຖານທີ່ລົງຄະແນນເລືອກຕັ້ງບ່ອນໃດກໍໄດ້ໃນຄາວຕີ້ທີ່ທ່ານໄດ້ລົງທະບຽນເລືອກຕັ້ງໄວ້.

# ຄຳຖາມທົ່ວໄປ

## PAI ສາມາດຊ່ວຍຂ້າພະເຈົ້າໄດ້ບໍ່?

ໄດ້. HAVA ເວົ້າວ່າ PAI ຕ້ອງຮັບປະກັນວ່າທ່ານສາມາດໃຊ້ສິດຂອງທ່ານໃນການເລືອກຕັ້ງໄດ້.

ຖ້າວ່າທ່ານຮູ້ສຶກວ່າຖືກຈຳແນກຕໍ່ຕ້ານຍ້ອນຄວາມພິການຂອງທ່ານ, ຫລືຖ້າວ່າທ່ານຄິດວ່າມີການລະເມີດກົດໝາຍໃດໆ, ຈົ່ງຕິດຕໍ່ PAI. ສຳລັບຂໍ້ມູນຕິດຕໍ່ຂອງ PAI, ໃຫ້ເບິ່ງໜ້າ 9.

## ການລົງຄະແນນເລືອກຕັ້ງແບບຊົ່ວຄາວຄືຫຍັງ?

ຖ້າວ່າພະນັກງານເລືອກຕັ້ງບໍ່ສາມາດຕັດສິນໄດ້ວ່າທ່ານໄດ້ລົງທະບຽນຢ່າງຖືກຕ້ອງຫລືບໍ່, ເຂົາເຈົ້າຈະຂໍໃຫ້ທ່ານປະກອບຂໍ້ມູນ ໃນບັດເລືອກຕັ້ງ "ຊົ່ວຄາວ". ບັດເລືອກຕັ້ງຊົ່ວຄາວຂອງທ່ານຈະຖືກຈັດໃສ່ໃນຊອງຈົດໝາຍພິເສດໃນຫີບເລືອກຕັ້ງ. ຈາກນັ້ນ, ທາງຫ້ອງການການເລືອກຕັ້ງປະຈຳຄາວຕີ້ຈະກວດເບິ່ງການລົງທະບຽນຂອງທ່ານ ແລະເບິ່ງວ່າທ່ານມີສິດໃນການເລືອກຕັ້ງ. ຖ້າວ່າທ່ານມີສິດເລືອກຕັ້ງ, ເຂົາເຈົ້າຈະນັບບັດລົງຄະແນນສຽງຂອງທ່ານ.

## ຈະເຮັດແນວໃດ ຖ້າວ່າຂ້າພະເຈົ້າເຂົ້ານອນໃນໂຮງໝໍໃນວັນ ຫລືກ່ອນໜ້າວັນເລືອກຕັ້ງ?

ທ່ານຍັງສາມາດເລືອກຕັ້ງໄດ້ຢູ່. ຈົ່ງຂໍເອົາ **Emergency Absentee (ບັດເລືອກຕັ້ງສຸກເສີນສຳລັບຜູ້ບໍ່ມາ)** ຫລື **Hospitalized Voter Ballot (ບັດເລືອກຕັ້ງສຳລັບຜູ້ນອນໂຮງໝໍ)**. ຈົ່ງໂທຣຫາຫ້ອງການການເລືອກຕັ້ງປະຈຳຄາວຕີ້ຂອງທ່ານເພື່ອຂໍເອົາໃບສະມັກ. ຈາກນັ້ນ, ໃຫ້ສົ່ງໃຜຜູ້ໜຶ່ງໄປທີ່ຫ້ອງການການເລືອກຕັ້ງປະຈຳຄາວຕີ້ເພື່ອຮັບເອົາບັດເລືອກຕັ້ງສຳລັບຜູ້ບໍ່ມາ. ຫລັງຈາກທ່ານລົງຄະແນນສຽງເລືອກຕັ້ງແລ້ວ, ເຂົາເຈົ້າສາມາດສົ່ງບັດເລືອກຕັ້ງໄປທີ່ສະຖານທີ່ລົງຄະແນນເລືອກຕັ້ງໄດ້.

## ຈະເຮັດແນວໃດ ຖ້າວ່າຂ້າພະເຈົ້າຂຽນຜິດໃນບັດເລືອກຕັ້ງ?

ຈົ່ງເອົາບັດເລືອກຕັ້ງຂອງທ່ານຄືນໃຫ້ແກ່ພະນັກງານດູແລການເລືອກຕັ້ງ. ເຂົາເຈົ້າຈະເອົາບັດໃໝ່ໃຫ້ທ່ານ. ທ່ານສາມາດຂໍບັດເລືອກຕັ້ງໃໝ່ໄດ້ສາມເທື່ອ. ແຕ່ທ່ານບໍ່ສາມາດເອົາບັດເລືອກຕັ້ງໃໝ່ໄດ້ ຖ້າວ່າທ່ານປ່ອນບັດເລືອກຕັ້ງລົງໃນຫີບເລືອກຕັ້ງແລ້ວ. ຖ້າວ່າທ່ານມີບັນຫາຫຍຸ້ງຍາກກັບອຸປະກອນເລືອກຕັ້ງ, ຈົ່ງຂໍໃຫ້ພະນັກງານດູແລການເລືອກຕັ້ງຊ່ວຍທ່ານ.

**Alameda**
(510) 267-6933
www.acgov.org/

**Alpine**
(530) 694-2281
www.co.alpinecounty.ca.gov

**Amador**
(209) 223-6465
www.co.amador.ca.us/depts/elections/index.htm

**Butte**
(800) 538-7761 (ສະເພາະ Butte ເທົ່ານັ້ນ)
(530) 538-6366
http://clerk-recorder.buttecounty.net

**Calaveras**
(209) 754-6376
www.co.calaveras.ca.us/departments/recorder.html

**Colusa**
(530) 458-0500
www.colusacountyclerk.com

**Contra Costa**
(925) 335-7800
www.cocovote.us

**Del Norte**
(707) 464-7216
(707) 465-0383
www.co.del-norte.ca.us

**El Dorado**
(530) 621-7480
www.co.el-dorado.ca.us/elections

**Fresno**
(559) 488-3246
www.co.fresno.ca.us

**Glenn**
(530) 934-6414
www.countyofglenn.net/Elections

**Humboldt**
(707) 445-7678
www.co.humboldt.ca.us/election

**Imperial**
(760) 482-4226
www.imperialcounty.net/Election

**Inyo**
(760) 878-0224
www.countyofinyo.org

**Kern**
(661) 868-3590
www.co.kern.ca.us/elections/

**Kings**
(559) 582-3211 ຕໍ່ 4401
www.countyofkings.com

**Lake**
(707) 263-2372
www.co.lake.ca.us

**Lassen**
(530) 251-8217
http://clerk.lassencounty.org/registrar.htm

**Los Angeles**
1-800-815-2666
(562) 466-1310 (ສະເພາະ LA ເທົ່ານັ້ນ)
www.lavote.net

**Madera**
(559) 675-7720
www.madera-county.com

**Marin**
(415) 499-6456
http://co.marin.ca.us/depts/RV/main/index.cfm

**Mariposa**
(209) 966-2007
www.mariposacounty.org

**Mendocino**
(707) 463-4371
www.co.mendocino.ca.us/acr

**Merced**
(209) 385-7541
www.co.merced.ca.us/elections/index.html

**Modoc**
(530) 233-6201

**Mono**
(760) 932-5537
www.monocounty.ca.gov

**Monterey**
(831) 796-1499
http://montereycountyelections.us

**Napa**
(707) 253-4321
www.co.napa.ca.us/gov/Departments

**Nevada**
(530) 265-1298
http://new.mynevadacounty.com/elections

**Orange**
(714) 567-7600
www.ocvote.com

**Placer**
(530) 886-5650
www.placer.ca.gov/recorder/elections.aspx

**Plumas**
(530) 283-6256
www.countyofplumas.com/clerkrecorder/elections

**Riverside**
(951) 486-7200
www.voteinfo.net

**Sacramento**
(916) 875-6451
www.elections.saccounty.net

**San Benito**
(831) 636-4016
www.sanbenitocountyelections.us

**San Bernardino**
(909) 387-8300
www.sbcrov.com

**San Diego**
(800) 696-0136
(858) 565-5800
www.sdvote.com

**San Francisco**
(415) 554-4375
www.sfgov.org/election

**San Joaquin**
(209) 468-2885
www.sjcrov.org

**San Luis Obispo**
(805) 781-5228
www.slocounty.ca.gov/clerk

**San Mateo**
(650) 312-5222
www.shapethefuture.org/voters/default.asp

**Santa Barbara**
ເຊົາທ໌ ຄາວຕີ້: (805) 568-2200
ນອທ ຄາວຕີ້: (805) 346-8374
www.sbcvote.com

**Santa Clara**
(408) 299-8683
www.sccvote.org

**Santa Cruz**
(831) 454-2060
www.votescount.com

**Shasta**
(530) 225-5730
www.co.shasta.ca.us/departments/countyclerkregistrarofvoters/index.shtml

**Sierra**
(530) 289-3295
www.sierracounty.ws

**Siskiyou**
(530) 842-8084
www.co.siskiyou.ca.us/clerk/elections/elections.htm

**Solano**
(707) 784-6675
www.solanocounty.com/elections

**Sonoma**
(707) 565-6800
www.sonoma-county.org/regvoter/index.htm

**Stanislaus**
(209) 525-5200
http://stanvote.com

**Sutter**
(530) 822-7122
www.sutter.us/doc/government/depts/cr/elections/cr_elections_home

**Tehama**
(530) 527-8190
www.co.tehama.ca.us

**Trinity**
(530) 623-1220
www.trinitycounty.org/elections

**Tulare**
(559) 733-6275
www.tularecoelections.org/

**Tuolumne**
(209) 533-5570
www.tuolumnecounty.ca.gov

**Ventura**
(805) 654-2781
http://recorder.countyofventura.org/elections.htm

**Yolo**
(530) 666-8133
www.yoloelections.org/

**Yuba**
(530) 749-7855
http://elections.co.yuba.ca.us